**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມນ້ຳປະປາ
ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ
ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ

ເລກທີ 915 /ຄຂນສອ
ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2025

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ເຖິງ: ບັນດາບໍລິສັດ / ຫ້າງຮ້ານ ທີ່ສົນໃຈ

ເລື່ອງ: **ເຊີນເຂົ້າຮ່ວມການປະມູນສົມທຽບລາຄາ ການຈັດຊື້ເຄື່ອງກວດກາຄຸນນະພາບນ້ຳ ໃຫ້ແກ່ ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ.**

1. ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ ແມ່ນ ໂຄງການໜຶ່ງ ທີ່ຈັດຕັ້ງປະຕິບັດໂດຍ ກົມນ້ຳປະປາ ກະຊວງໂຍທາທິການ ແລະ ຂົນສົ່ງ, ເຊິ່ງໄດ້ຮັບທຶນກູ້ຢືມ ຈາກທະນາຄານໂລກ ເພື່ອດຳເນີນການປະມູນຈັດຊື້ ເຄື່ອງກວດກາຄຸນນະພາບນ້ຳ ດ້ວຍການປະມູນແບບສົມທຽບ ລາຄາ.
2. ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ ຂໍເຊີນ ບໍລິສັດ/ຮ້ານ ຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສຳລັບການຈັດຊື້ ເຄື່ອງກວດກາຄຸນນະພາບນ້ຳ, ໄລຍະເວລາສົ່ງມອບ ຫຼື ການບໍລິການແມ່ນ 30 ວັນ ພາຍຫຼັງເຊັນສັນຍາ.
3. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ, ສະບັບ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນສົມທຽບລາຄາ ຈະຕ້ອງສົ່ງກ່ອນ ເວລາ 15:10 ໂມງ, ຂອງວັນທີ 09 ມັງກອນ 2026, ທີ່ຫ້ອງປະຊຸມ ຊັ້ນ 04 ຂອງໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ (ຖະໜົນດົງປ່າລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ) ແລະ ຊອງປະມູນສົມທຽບ ລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 15:10 ໂມງ, ຂອງວັນທີ 09 ມັງກອນ 2026, ໂດຍຊ່ອງໜ້າຄະນະ ກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.
5. ຜູ້ເຂົ້າຮ່ວມແຂ່ງຂັນປະມູນສົມທຽບລາຄາ ສາມາດສອບຖາມຂໍ້ມູນເພີ່ມເຕີມ ໂທ 021 451826, ອີເມວ: swsshp.procurement@gmail.com.

**ຫົວໜ້າໂຄງການ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ
ນະຄອນຫຼວງວຽງຈັນ

ຈັນເທພາ ຂັດຕິຍະວົງ